ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທະນາຄານກາງ ແຫ່ງ ລາວ - ກຳປູເຈຍ ສືບຕໍ່ຮ່ວມມື




ໃນວັນທີ 21 ທັນວາ 2020 ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີກອງປະຊຸມທະວິພາຄີ ປະຈຳປີ 2020 (ແບບທາງໄກ) ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານແຫ່ງຊາດ ກຳປູເຈຍ ຊຶ່ງຝ່າຍ ທຫລ ນຳໂດຍ ທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ ພ້ອມຄະນະ ແລະ ຝ່າຍທະນາຄານແຫ່ງຊາດກຳປູເຈຍ ນຳໂດຍ ທ່ານ ເຈຍ ຈັນໂຕ ຜູ້ວ່າການ ທະນາຄານແຫ່ງຊາດ ກຳປູເຈຍ ພ້ອມດ້ວຍຄະນະ.



ກອງປະຊຸມໃນຄັ້ງນີ້ໄດ້ສະຫຼຸບໝາກຜົນການຮ່ວມມືໃນຂະແໜງການເງິນ-ເງິນຕາ ແລະ ແລກປ່ຽນບົດຮຽນທາງດ້ານວິຊາການຮ່ວມກັນໃນຫຼາຍບັນຫາສຳຄັນໂດຍສະເພາະ: ສະພາບເສດຖະກິດມະຫາພາກ, ແລກປ່ຽນກ່ຽວກັບມາດຕະການແກ້ໄຂທາງດ້ານການເງິນ-ເງິນຕາໃນໄລຍະການແຜ່ລະບາດຂອງພະຍາດ COVID-19, ຕີລາຄາຜົນການຮ່ວມມືສອງຝ່າຍໃນ 1 ປີ ຜ່ານມາ. ພ້ອມດຽວກັນນີ້, ຍັງໄດ້ປຶກສາຫາລື ແລະ ແລກປ່ຽນກ່ຽວກັບຄວາມເປັນໄປໄດ້ໃນການຈັດຕັ້ງປະຕິບັດແຜນຮ່ວມມືທາງດ້ານວິຊາການລະຫວ່າງສອງທະນາຄານກາງໃນຮູບແບບທາງໄກ ເພື່ອເຮັດໃຫ້ແທດເໝາະກັບສະພາບປົກກະຕິໃນຮູບແບບໃໝ່ (New Normal) ໃນຫົວຂໍ້ທີ່ເຫັນວ່າມີຄວາມຈຳເປັນ ແລະ ບັນຫາອື່ນໆ ທີ່ທັງສອງຝ່າຍມີຄວາມສົນໃຈ. ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍບັນຍາກາດໄມຕີຈິດມິດຕະພາບ,  ຄວາມສາມັກຄີ ແລະ ການຮ່ວມມືທີ່ດີ ລະຫວ່າງ 2 ທະນາຄານກາງ ແລະ ສາມາດບັນລຸຜົນສຳເລັດຕາມລະດັບຄາດໝາຍ.

**#ຂ່າວໂດຍ: ກົມຮ່ວມມືສາກົນ**

**#ພາບໂດຍ: ນາງ ປາໄນ ພັນທະລາ**

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ